ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ: 036 /ທຄຕລ 2020

ນະຄອນຫຼວງວຽງຈັນ, ວັນທີ: 30/03/2020

# ໜັງສືແຈ້ງເຊີນ

**ເຖິງ** : ບັນດາບໍລິສັດ, ຫ້າງຮ້ານຕົວແທນຈຳໜ່າຍຮ້ານຂາຍສິ້ນ ແລະ ແພເສື່ອ ຢູ່ໃນນະຄອນຫລວງວຽງຈັນ.

**ເລື່ອງ** : ແຈ້ງເຊີນເຂົ້າຮ່ວມການປະເມີນລາຄາສິ້ນ ແລະ ແພເສື່ອ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງມາຍັງທ່ານຊາບບັນດາບໍລິສັດ ແລະ ຫ້າງຮ້ານຕົວແທນຈຳໜ່າຍຮ້ານຂາຍສິ້ນ ແລະ ແພເສື່ອ ເພື່ອປະກອບເຄື່ອງແບບໃຫ້ແກ່ພະນັກງານ ທຄຕລ ຕາມລາຍລະອຽດລຸ່ມນີ້ :

| ລ/ດ | ລາຍການ | ເງື່ອນໄຂກ່ຽວກັບສິ້ນ | ຈຳນວນ |
|---|---|---|---|
| 1 | ສິ້ນຈຸດດຳ | - ຕ້ອງເປັນສິ້ນໄໝຫຼາບເບີ 1 ທັງຜືນສິ້ນ ແລະ ຕີນສິ້ນ.<br>- ການຕຳຜືນສິ້ນ ແມ່ນໃຊ້ໄໝຫຼາບເບີ 1 ຕ່ຳ 3 ເສັ້ນ ແລະ ຕີນສິ້ນໃຊ້ໄໝຫຼາບລ່ວງເບີ 1 ຕ່ຳ 6 ເສັ້ນ.<br>- ຕ້ອງໃຊ້ໄໝຄຳເບີ 1 ແລະ ໄໝຄຳສີທອງ ເບີ 1 ໃນການເກາະ ຫຼື ຂິດ ( ລວມທັງຕີນສິ້ນ ແລະ ຜືນ ).<br>- ຕີນສິ້ນຕ້ອງເປັນຟືມ 10 ລິບ ຄວາມກ້ວາງ 19 ຊມ.<br>- ຜືນສິ້ນຕ້ອງກ້ວາງ 180 ຊມ. | 800 ຜືນ |
| 2 | ສິ້ນຂັ້ນ | - ຕ້ອງເປັນສິ້ນໄໝຫຼາບເບີ 1 ທັງຜືນ ແລະ ຕີນສິ້ນ.<br>- ການຕຳຜືນສິ້ນ ແມ່ນໃຊ້ໄໝຫຼາບເບີ 1 ຕ່ຳ 3 ເສັ້ນ.<br>- ຕີນສິ້ນໃຊ້ໄໝຫຼາບເບີ 1, ລ່ວງ 6 ເສັ້ນ.<br>- ໃຊ້ໄໝຄຳເບີ 12 ແລະ ໄໝຄຳທອງເບີ 3 ໃນການເກາະ ແລະ ຂິດ ( ລວມທັງຜືນສິ້ນ ແລະ ຕີນເສັ້ນ ).<br>- ຕີນສິ້ນຕ້ອງເປັນຟືມ 10 ລິບ ຄວາມກ້ວາງ 19 ຊມ.<br>- ຜືນສິ້ນຕ້ອງກ້ວາງ 180 ຊມ. | 800 ຜືນ |
| 3 | ແພເສື່ອ | - ແພສີລົມ ເນື້ອຝ້າຍ 60% ແລະ ເນື້ອນີລົງ 40 % ນ້ຳເບີ 1 ໜ້າກ້ວາງ 1. 5 ແມັດ<br>**ໝາຍເຫດ** : ສາມາດເອົາຕົວຢ່າງແພ ນຳ ທຄຕລ ໄດ້.<br>- ຖ້າບໍລິສັດສາມາດອອກແບບເປັນເອກະລັກສະເພາະຂອງ ທຄຕລ ແມ່ນໃຫ້ສະເໜີເງື່ອນມາໄດ້. | 2.700 ແມັດ |

1. **ເງື່ອນໄຂຂອງບໍລິສັດ ,ຫ້າງຮ້ານຜູ້ສະໜອງທີ່ຈະຍື່ນຊອງປະມູນຕ້ອງປະກອບມີລາຍການດັ່ງນີ້:**

- **<u>ບັນຈຸໃສ່ຊອງທີ່1 (ບໍ່ປິດຊອງ):</u>** ໃບທະບຽນວິສາຫະກິດ, ໃບຢັ້ງຢືນການມອບພັນທະອາກອນປີປະຈຸບັນ, ໃບຢັ້ງຢືນເປັນຕົວແທນຈຳໜ່າຍ ( ຖ້າມີ ).

- ກຳນົດຍື່ນຊອງມາດຕະຖານເຕັກນິກກ່ອນ 11:00 ໂມງຂອງ ວັນທີ 10/04/2020 ໃນໂມງລັດຖະການທີ່ ພະແນກຫ້ອງການບໍລິຫານ-ການເງິນ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສຳນັກງານໃຫຍ່ ທີ່ປ່ອງບໍລິການຂາເຂົ້າ-ຂາອອກ ຊັ້ນ 4 ອາຄານ C ແລະ **ຄັດຕິດສິນຄ້າຕົວຢ່າງທີ່ຈະເຂົ້າຮ່ວມປະມູນມາພ້ອມ.**
- **<u>ບັນບັນຈຸໃສ່ຊອງທີ່2 (ປິດຊອງ):</u>** ໃບສະເໜີລາຄາ (ຕ້ອງກຳນົດເປັນເງິນກີບລວມອາກອນ).
  - ສະເໜີລາຄາເປັນສະກຸນເງິນກີບ ແລະ ລວມອາກອນມູນຄ່າເພີ່ມ(10%).

2. **ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ, ການຊຳລະແບ່ງຈ່າຍເປັນ 03 ງວດ ລຸ່ມນີ້:**

- ງວດທີ1: ຊຳລະ 40% ຂອງມູນຄ່າພາຍຫລັງເຊັນສັນຍາທັງສອງຝ່າຍ ແລະ ສຳເລັດການຈົດທະບຽນສັນຍາຈາກພາກສ່ວນທີ່ກ່ຽວຂ້ອງ (ຄ່າທຳນຽມໃນການຈົດທະບຽນສັນຍາຄວາມຮັບຜິດຊອບຂອງຜູ້ສະໜອງ).
- ງວດທີ2: ຊຳລະ 50% ຂອງມູນຄ່າສັນຍາທັງໝົດພາຍຫຼັງມອບຮັບເຄື່ອງເຂົ້າສາງຄົບຖ້ວນແລ້ວ, ພາຍໃນ10 ວັນລັດຖະການ;
- ງວດທີ03: ຊຳລະອີກ 10% ຂອງມູນຄ່າສັນຍາຫຼັງຈາກມື້ທີ່ສິ້ນສຸດເວລາຂອງການຄ້ຳປະກັນສິນຄ້າພາຍໃນ 10 ວັນລັດຖະການ.

**<u>ໝາຍເຫດ:</u>**

1. ຜູ້ແຂ່ງຂັນປະມູນຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 2% ຂອງມູນຄ່າທັງໝົດ ຫຼື ສາມາດປະກອບໜັງສືຄ້ຳປະກັນທີ່ອອກໂດຍ ທະນາຄານ ມາໃຫ້ ທຄຕລ ໃນມື້ທີ່ນຳຊອງສະເໜີລາຄາມາຍື່ນ. ພາຍຫລັງປະກາດຜົນ ທຄຕລ ຈະສົ່ງເງິນຄ້ຳປະກັນດັ່ງກ່າວຄືນ.
2. ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ຫຼື ບໍ່ຍື່ນເງິນຄ້ຳປະກັນການປະຕິບັດສັນຍາຕາມກຳນົດ, ຜູ້ຊະນະການປະມູນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ຜູ້ຈັດຊື້-ຈັດຈ້າງໃນມູນຄ່າເທົ່າກັບ 2% ຂອງມູນຄ່າທີ່ສະເໜີປະມູນ.
3. ຜູ້ສະໜອງຕ້ອງຖືກຫັກເງິນຄ້ຳປະກັນສັນຍາ 10% ຕາມອາຍຸຂອງການຄ້ຳປະກັນສິນຄ້າ ຫຼື ສະມາດປະກອບໜັງສືຄ້ຳປະກັນຈາກທະນາຄານ ຫຼື ສະຖາບັນການເງິນໃຫ້ ທຄຕລ ຈົນກວ່າຈະໝົດໄລຍະເວລາຄ້ຳປະກັນ.
4. ຄ່າທຳນຽມໃນການຈົດທະບຽນສັນຍາ ແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງຜູ້ສະໜອງ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ຜູ້ອຳນວຍການທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**

ສຸພັກ ຖິ່ນໄຊພອນ

ຜູ້ປະສານງານ

ນ . ວັນມີນາ ລໍຄຳຈັນ 020 5933 3349

ນ. ນິດທິດາ ທິບພະວົງໄຊ 020 55381897